ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 424/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 26 ກັນຍາ 2018

# ແຈ້ງການ

ເຖິງ: ບຸກຄົນ,ນິຕິບຸກຄົນ, ພໍ່ຄ້າຊາວຂາຍ ແລະ ບັນດາຫ້າງຮ້ານຕ່າງໆໃນຂອບເຂດທົ່ວປະເທດ;
ເລື່ອງ: ບໍ່ໃຫ້ນຳເອົາທະນະບັດ (ເງິນກີບ) ໃບໃໝ່ ໄປວາງຂາຍ ຫຼື ແລກປ່ຽນ ເພື່ອເາງກຳໄລ.

- ອີງຕາມ ກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ສະບັບປັບປຸງເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018.

ທະນາຄານແຫ່ງ ສປປ ລາວ ຂໍແຈ້ງໃຫ້ຊາບວ່າ: ໃນໄລຍະຜ່ານມາຍັງມີບຸກຄົນ, ນິຕິບຸກຄົນ, ພໍ່ຄ້າຊາວຂາຍ ແລະ ບັນດາຫ້າງຮ້ານຕ່າງໆ ໃນ ສປປ ລາວ ນຳເອົາທະນະບັດ (ເງິນກີບ) ໃບໃໝ່ໄປວາງຂາຍ ຫຼື ແລກປ່ຽນເພື່ອເາງກຳໄລ ໃນຮູບແບບຕ່າງໆເຊັ່ນ: ວາງຂາຍຕາມຮ້ານຂາຍວັດຖຸມີຄ່າ ແລະ ເຮັດເປັນຕົ້ນກາລະພຶກ ເພື່ອວາງຂາຍ ແລະ ອື່ນໆ, ຊຶ່ງການກະທຳດັ່ງກ່າວຖືເປັນການກະທຳບໍ່ຖືກຕ້ອງ, ຂັດຕໍ່ການຮັກສາຄ່າຂອງເງິນກີບ ແລະ ຂໍ້ຫ້າມໃນກົດໝາຍຂອງທະນາຄານແຫ່ງ ສປປ ລາວ ສະບັບປັບປຸງເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018, ສ້າງຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ;

ສະນັ້ນ, ທະນາຄານແຫ່ງ ສປປ ລາວ ຈຶ່ງບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ, ພໍ່ຄ້າຊາວຂາຍ ແລະ ບັນດາຫ້າງຮ້ານຕ່າງໆ ໃນ ສປປ ລາວ ນຳເອົາທະນະບັດ (ເງິນກີບ) ໃບໃໝ່ໄປວາງຂາຍ ຫຼື ແລກປ່ຽນເພື່ອເາງກຳໄລໃນທຸກຮູບແບບໂດຍເດັດຂາດ, ຜູ້ໃດພົບເຫັນການກະທຳດັ່ງກ່າວ ສາມາດແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດປະຈຳທ້ອງຖິ່ນເພື່ອລົງກວດກາ,ກໍລະນີພົບເຫັນຈະຖືກປະຕິບັດມາດຕະການຈາກເຈົ້າໜ້າທີ່ຕຳຫຼວດຕາມກໍລະນີເບົາ ຫຼື ໜັກດັ່ງນີ້:

1. ພົບເຫັນຄັ້ງທຳອິດ ຈະຖືກກ່າວເຕືອນ ແລະ ເຮັດບົດບັນທຶກໄວ້ເປັນລາຍລັກອັກສອນ;
2. ພົບເຫັນຄັ້ງທີສອງ ຈະຖືກປັບໃໝ 1.000.000 (ໜຶ່ງລ້ານ) ກີບ;
3. ພົບເຫັນຄັ້ງທີສາມ ຈະຖືກປັບໃໝ 3.000.000 (ສາມລ້ານ) ກີບ;
4. ກໍລະນີຍັງສືບຕໍ່ກະທຳ ຫຼື ກະທຳເປັນອາຈິນ ຈະຖືກປັບໃໝ 20.000.000 (ຊາວລ້ານ) ກີບ;

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຮັກສາການ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ.ລ
ຜູ້ວ່າການ

ສອນໄຊ ສິດພະໄຊ